ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ຫ້ອງການ

ເລກທີ 3231/ຫອຄ.ກຊອ

ນະຄອນຫລວງວຽງຈັນ, ວັນທີ 25 DEC 2017

ເຖິງ: ...........................................................................................................

ເລື່ອງ: ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ Registered Exporters System (REX).

- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດຂອງສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ ສະບັບເລກທີ 0087/ອຄ.ກຊອ, ລົງວັນທີ 19 ມັງກອນ 2017.

ຫ້ອງການ ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ນັບແຕ່ວັນທີ 01/01/2017 ເປັນຕົ້ນມາ ສປປ ລາວ ໄດ້ເລີ່ມຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ (Registered Exporters System - REX) ໂດຍມອບໃຫ້ຜູ້ສົ່ງອອກເປັນຜູ້ຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໂດຍປ່ຽນແທນຟອມ A ທີ່ອອກໃຫ້ໂດຍເຈົ້າໜ້າທີ່ພາກລັດໃນໄລຍະຜ່ານມາ. ນັບຕັ້ງແຕ່ວັນທີ <u>01/01/2018</u> ເປັນຕົ້ນໄປ ໃຫ້ເຈົ້າໜ້າທີ່ຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າໃນຂອບເຂດທົ່ວປະເທດ ຢຸດເຊົາການອອກຟອມ A ໃຫ້ຜູ້ສົ່ງອອກສິນຄ້າໄປຍັງ ສະຫະພາບເອີຣົບ (28 ປະເທດ), ນອກແວ, ແລະ ສະວິດ; ຜູ້ສົ່ງອອກສິນຄ້າໄປຍັງປະເທດດັ່ງກ່າວມານີ້ ຕ້ອງມາລົງທະບຽນນໍາກົມການນໍາເຂົ້າ ແລະ ສົ່ງອອກ ເພື່ອຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພຽງຢ່າງດຽວ ໂດຍປະຕິບັດຕາມຂໍ້ຕົກລົງສະບັບເລກທີ 0087/ອຄ.ກຊອ, ລົງວັນທີ 19 ມັງກອນ 2017 ວ່າດ້ວຍການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດຂອງສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການ

ຫ້ອງການ

ນ.ບານສະຕິ ເທບພະວົງ

<u>ຕິດຕໍ່ພົວພັນ:</u>

ໂທ: 021 450255

- ທ. ວັນໄຊ ແກ້ວຄໍາພັນ 020 56885899
- ທ.ນ. ສຸພາພອນ ທິບພະວົງ 020 59641596